# ວິທີການລົງຄະແນນສຽງ

VOTE 2026

*ການລົງຄະແນນຂອງທ່ານແມ່ນສຽງຂອງທ່ານ - ຈົດທະບຽນ, ໄດ້ຮັບການແຈ້ງໃຫ້ຊາບ, ໄປລົງຄະແນນສຽງ!*

## *ຜູ້ໃດສາມາດລົງຄະແນນສຽງ?*

ການຈະລົງຄະແນນສຽງໃນລັດມິນນີໂຊຕາ ທ່ານຈະຕ້ອງເປັນພົນລະເມືອງຂອງສະຫະລັດອະເມລິກາ, ມີອາຍຸຢ່າງນ້ອຍ 18 ປີໃນວັນເລືອກຕັ້ງ, ແລະອາໄສຢູ່ໃນລັດມິນນີໂຊຕາຢ່າງນ້ອຍ 20 ວັນ

ຖ້າທ່ານຖືກຕັດສິນໂທດຄະດີອາຍາ, ທ່ານກໍ່ຍັງສາມາດລົງຄະແນນສຽງໄດ້ ຖ້າທ່ານຍັງບໍ່ໄດ້ຖືກຄຸມຂັງຍ້ອນການກະທຳຜິດທາງອາຍາ.

ທ່ານສາມາດລົງຄະແນນສຽງໃນຂະນະທີ່ຢູ່ພາຍໃຕ້ການປົກຄອງຜູ້ອື່ນໄດ້ ເວັ້ນເສຍແຕ່ວ່າຜູ້ພິພາກສາໄດ້ຍົກເລີກສິດທິໃນການລົງຄະແນນສຽງຂອງທ່ານ

## *ລົງທະບຽນເພື່ອລົງຄະແນນສຽງ*

ທ່ານຕ້ອງລົງທະບຽນເພື່ອລົງຄະແນນສຽງຕາມທີ່ຢູ່ປັດຈຸບັນຂອງທ່ານ ຖ້າຈະລົງທະບຽນຫຼືປັບປຸງການຈົດທະບຽນຂອງທ່ານ ໃຫ້ໄປທີ່ mnvotes.gov

ນອກນັ້ນທ່ານຍັງສາມາດລົງທະບຽນທີ່ສະຖານທີ່ປ່ອນບັດຂອງທ່ານໃນວັນເລືອກຕັ້ງ ທ່ານຕ້ອງສະແດງຫຼັກຖານຊື່ແລະທີ່ຢູ່ໃນປັດຈຸບັນຂອງທ່ານ ສຳລັບລາຍລະອຽດເພີ່ມເຕີມ ໃຫ້ໄປທີ່ mnvotes.gov ຫຼື ໂທ 1-877-600-VOTE

## *ເບິ່ງບັດລົງຄະແນນສຽງຕົວຢ່າງຂອງທ່ານ*

ເຂົ້າໄປເບິ່ງຜູ້ສະໝັກແລະຄຳຖາມທີ່ຈະຢູ່ໃນບັດລົງຄະແນນສຽງຂອງທ່ານ ໄປທີ່ mnvotes.gov

### *ວັນທີຂອງປີ 2026*

***ການເລືອກຕັ້ງຂັ້ນຕົ້ນ***
*ວັນອັງຄານ, ວັນທີ 11 ສິງຫາ*

***ລົງຄະແນນສຽງລ່ວງໜ້າ ຖ້າທ່ານບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້***

***ລົງຄະແນນສຽງຈະມີດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້***
*ລົງຄະແນນສຽງທາງໄປສະນີ ຫຼື ດ້ວຍຕົວເອງວັນທີ 18 ກັນຍາ ເຖິງ 2 ພຶດສະຈິກາ*

***ລົງທະບຽນເພື່ອລົງຄະແນນສຽງ***
*ລົງທະບຽນລ່ວງໜ້າ ພາຍໃນວັນທີ 13 ຕຸລາ ເພື່ອຊ່ວຍປະຢັດເວລາ ໃນວັນເລືອກຕັ້ງ*

***ວັນເລືອກຕັ້ງ***
*ວັນອັງຄານ ວັນທີ 3 ເດືອນພຶດສະຈິກາ*

ມີຕໍ່ຂ້າງຫລັງ...

# ວິທີການລົງຄະແນນສຽງ

VOTE 2026

...ສືບຕໍ່ຈາກຂ້າງໜ້າ

## ສະຖານທີ່ລົງຄະແນນສຽງແລະເວລາ

ຊອກຫາບ່ອນທີ່ທ່ານລົງຄະແນນສຽງ ໄປທີ່ mnvotes.gov ສະຖານທີ່ເລືອກຕັ້ງສ່ວນຫຼາຍເປີດແຕ່ 7 ໂມງເຊົ້າເຖິງ 8 ໂມງແລງ

## ສິ່ງທີ່ຕ້ອງເອົາໄປນຳ

ຖ້າວ່າທ່ານໄດ້ລົງທະບຽນເພື່ອລົງຄະແນນສຽງຢູ່ບ່ອນຢູ່ປັດຈຸບັນຂອງທ່ານ ທ່ານບໍ່ຈຳເປັນຕ້ອງເອົາບັດປະຈຳໂຕມານຳ ຖ້າຫາກວ່າທ່ານຕ້ອງການລົງທະບຽນຫຼືປັບປຸງການຈົດທະບຽນຂອງທ່ານ ທ່ານຈະຕ້ອງໄດ້ສະແດງຫຼັກຖານທີ່ຢູ່ອາໄສຂອງທ່ານໃຫ້ເຫັນກ່ອນທີ່ທ່ານຈະລົງຄະແນນສຽງ ເພື່ອຮຽນຮູ້ເພີ່ມເຕີມ ໃຫ້ໄປທີ່ mnvotes.gov ຫຼື ໂທ 1-877-600-VOTE

## ລົງຄະແນນສຽງແຕ່ທຳອິດໂດຍໃຊ້ບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້

ທ່ານສາມາດລົງຄະແນນສຽງແຕ່ທຳອິດໄດ້ທີ່ຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານເລີ່ມຕົ້ນແຕ່ວັນສຸກ ວັນທີ 18 ກັນຍາ ນອກນັ້ນທ່ານຍັງສາມາດສະໝັກຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ສົ່ງໃຫ້ທ່ານທາງໄປສະນີໄດ້ ຊອກຫາຫ້ອງການເລືອກຕັ້ງທ້ອງຖິ່ນຂອງທ່ານ ຫຼືຂໍບັດລົງຄະແນນສຽງຊະນິດບໍ່ສາມາດໄປບ່ອນທີ່ເລືອກຕັ້ງໄດ້ໃຫ້ໄປທີ່ mnvotes.gov

### ຢຸດເຮັດວຽກເພື່ອໄປລົງຄະແນນສຽງ

*ທ່ານມີສິດຢຸດເຮັດວຽກເພື່ອໄປລົງຄະແນນສຽງໂດຍບໍ່ຕ້ອງຖືກຫຼູດເງິນຂອງທ່ານ,ເສຍເວລາວັນຢຸດ ຫຼືເວລາພັກຮ້ອນຂອງທ່ານ*

ສຳນັກງານລັດຖະມົນຕີ ລັດມິນນີໂຊຕາ
mnvotes.gov • 1-877-600-VOTE